# ຢຸດເຮັດວຽກເພື່ອໄປລົງຄະແນນສຽງ

**VOTE 2026**

## *ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼຸດເງິນ ຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*

ນາຍຈ້າງຂອງທ່ານຕ້ອງຈ່າຍຄ່າຈ້າງໃຫ້ ທ່ານໃນເວລາທີ່ທ່ານໄປລົງຄະແນນສຽງ ຖ້າວ່າມັນເປັນເວລາ ເຮັດວຽກຂອງທ່ານ ນາຍຈ້າງຂອງທ່ານບໍ່ສາ ມາດຮຽກຮ້ອງໃຫ້ທ່ານໃຊ້ເວລາພັກຜ່ອນສ່ວນບຸກຄົນຫຼືເວລາພັກ ຮ້ອນຂອງທ່ານ

ໃຫ້ທ່ານໃຊ້ເວລາພຽງແຕ່ໄປລົງຄະແນນສຽງເທົ່ານັ້ນແລ້ວກັບຄືນ ໄປເຮັດວຽກ

ນາຍຈ້າງຂອງທ່ານບໍ່ສາມາດປະຕິເສດ,ຈຳກັດ, ຫຼືແຊກແຊງສິດນີ້ ໂດຍກົງຫຼືໂດຍທາງອ້ອມ ລວມທັງເວລາໃດທີ່ທ່ານເລືອກທີ່ຈະໄປ ລົງຄະແນນສຽງ

ນາຍຈ້າງຂອງທ່ານສາມາດຂໍໃຫ້ທ່ານແຈ້ງເຂົາເຈົ້າເວລາທີ່ທ່ານຈະ ໄປ ແລະຂໍໃຫ້ພະນັກງານປະສານງານການຂາດງານຂອງພວກເຂົາ ເຈົ້າ ເພື່ອຫຼຸດຜ່ອນຜົນກະທົບໃນການເຊົາເຮັດວຽກ

ທ່ານມີສິດທີ່ຈະຢຸດເຮັດວຽກເພື່ອໄປລົງຄະແນນສຽງ ໃນການ ເລືອກຕັ້ງຂອງລັດແລະລັດຖະບານກາງທັງໝົດແລະໃນການ ເລືອກຕັ້ງປະຈຳທ້ອງຖິ່ນທັງໝົດທີ່ກຳນົດໄວ້

### *ວັນທີຂອງປີ 2026*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, ວັນທີ 11 ສິງຫາ*

***ລົງຄະແນຸນສຽງຈະນິດບໍ່ສາມາດ ໄປບ່ອນທີ່ເລືອກຕັ້ງໄດ້***
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 18 ກັນຍາ ເຖິງ 2 ພຶດສະຈິກາ*

***ລົງທະບຽນເພື່ອລົງຄະແນນສຽງ***
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 13 ຕຸລາ ເພື່ອຊ່ວຍປະຢັດເວລາ ໃນ ວັນເລືອກຕັ້ງ*

***ວັນເລືອກຕັ້ງ***
*ວັນອັງຄານ ວັນທີ3ເດືອນພຶດສະຈິກາ*

ມີຕໍ່ຂ້າງຫລັງ...

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*
*mnvotes.gov • 1-877-600-VOTE*

# ຢຸດເຮັດວຽກເພືອໄປລົງຄະແນນສຽງ

...ສືບຕໍ່ຈາກຂ້າງໜ້າ

## *ການຮ້ອງທຸກ*

ນາຍຈ້າງທີ່ລະເມີດກົດໝາຍນີ້ແມ່ນມີຄວາມຜິດອາຍາຖານເບົາ ທຸກໆຄໍາຮ້ອງທຸກຈາກພະນັກງານຄວນຍື່ນໃຫ້ທະນາຍຄວາມຂອງຄາວຕີ້

## *ລົງຄະແນນສຽງລ່ວງໜ້າດ້ວຍໃບລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງ*

ທ່ານສາມາດລົງຄະແນນສຽງລ່ວງໜ້າ ຖ້າຫາກວ່າທ່ານບໍ່ຕ້ອງການຫຼືບໍ່ສາມາດລົງຄະແນນສຽງດ້ວຍຕົວເອງໃນວັນເລືອກຕັ້ງ. ສິດລາວຽກເພື່ອໄປລົງຄະແນນສຽງແມ່ນໄດ້ຮັບການຂະຫຍາຍໃຫ້ເຖິງຊ່ວງໄລຍະເວລາການລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງ, ເຊິ່ງເລີ່ມຕົ້ນ 46 ວັນກ່ອນການເລືອກຕັ້ງ.

ທ່ານສາມາດລົງຄະແນນສຽງລ່ວງໜ້າ ດ້ວຍການລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງຢູ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ. ນອກນັ້ນທ່ານຍັງສາມາດຮ້ອງຂໍໃຫ້ມີບັດລົງຄະແນນສຽງແບບບໍ່ຕ້ອງໄປດ້ວຍຕົວເອງໃຫ້ທ່ານທາງໄປສະນີທີ່ mnvotes.gov/absentee.

**ຈົດໝາຍສໍາລັບນາຍຈ້າງຂອງທ່ານ**

*ໄປທີ mnvotes.gov ເພື່ອຊອກຫາຈົດໝາຍອະທິບາຍສິດທີ່ຢຸດເຮັດວຽກເພື່ອໄປລົງຄະແນນສຽງ ທີທ່ານສາມາດໃຫ້ນາຍຈ້າງຂອງທ່ານ*

ສໍານັກງານລັດຖະມົນຕີ ລັດມິນນີໂຊຕາ
mnvotes.gov • 1-877-600-VOTE